ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ
SOUVANNY HOME CENTER PUBLIC COMPANY
PHONETONGSAVAT RD , BAN PHONETONGSAVAT, CHANTHABULY DISTRICT, VIENTIANE CAPITAL
OFFICE TEL: (+856-21) 415645, FAX / TEL: (+856-21) 262984 , WWW.SOUVANNY.LA

ເລກທີ: 0235.../ສ.ອ.ມ
ນະຄອນຫຼວງວຽງຈັນ,ວັນທີ 18 ກຸມພາ 2026

ມະຕິ
ກອງປະຊຸມສະພາບໍລິຫານ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ
ຄັ້ງທີ 01 ປະຈຳປີ 2026, ວັນທີ 18 ກຸມພາ 2026

ກອງປະຊຸມສະພາບໍລິຫານຂອງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ຄັ້ງທີ 01/2026 ໄດ້ເປີດຂຶ້ນໃນເວລາ 14:00 ໂມງ ຂອງວັນທີ 18 ກຸມພາ 2026 ທີ່ສຳນັກງານໃຫຍ່ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ໂດຍເປັນປະທານຂອງ **ທ່ານ ສົມຈິດ ອິນທະມິດ** ປະທານສະພາບໍລິຫານ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ, ພ້ອມດ້ວຍສະມາຊິກສະພາບໍລິຫານ ແລະ ຜູ້ທີ່ຖືກເຊີນເຂົ້າຮ່ວມ.

ກອງປະຊຸມໄດ້ປຶກສາຫາລືບັນຫາຕ່າງໆພ້ອມໄດ້ມີມະຕິຕົກລົງ ຕາມລາຍລະອຽດລຸ່ມນີ້:

1. **ມະຕິ:** ເຫັນດີຮັບຮອງບົດລາຍງານກອງປະຊຸມວິສາມັນສະພາບໍລິຫານໃນຄັ້ງທີ 01/2025.
2. **ມະຕິ:** ເຫັນດີນຳບົດລາຍງານຜົນການດຳເນີນທຸລະກິດຂອງບໍລິສັດປະຈຳປີ 2025 ແລະ ຮ່າງບົດລາຍງານການເງິນຂອງບໍລິສັດ ປະຈຳປີ 2025 ໂດຍແຕ່ງຕັ້ງໃຫ້ **ທ່ານພັນໂນລາ ສຸຄະບັນດິດ** ເປັນຜູ້ປະສານງານກັບຜູ້ກວດສອບພາຍນອກ ຫາກຮ່າງບົດລາຍງານການເງິນຂອງບໍລິສັດມີການປ່ຽນແປງໃນສ່ວນທີ່ເປັນສາລະສຳຄັນແມ່ນໃຫ້ **ທ່ານພັນໂນລາ ສຸຄະບັນດິດ** ເປັນຜູ້ແຈ້ງໃຫ້ສະພາບໍລິຫານຮັບຊາບອີກເທື່ອໜຶ່ງ ແຕ່ຫາກມີການແກ້ພຽງເລັກໜ້ອຍ ທີ່ບໍ່ເຮັດໃຫ້ບົດລາຍງານການເງິນມີການປ່ຽນແປງໃນສາລະສຳຄັນ ໃຫ້ຖືວ່າຮ່າງບົດລາຍງານການເງິນສະບັບດັ່ງກ່າວເປັນບົດລາຍງານການເງິນຂອງບໍລິສັດ ປະຈຳປີ 2025 ທີ່ຈະສະເໜີໃຫ້ກອງປະຊຸມຜູ້ຖືຮຸ້ນຮັບຮອງຕໍ່ໄປ.
3. **ມະຕິ:** ເຫັນດີນຳແຜນການດຳເນີນທຸລະກິດຂອງບໍລິສັດປະຈຳປີ 2026 ແລະ ໃຫ້ນຳແຜນການດຳເນີນທຸລະກິດຂອງບໍລິສັດປະຈຳປີ 2026 ສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2025 ເພື່ອພິຈາລະນາ ແລະ ຮັບຮອງຕໍ່ໄປ.
4. **ມະຕິ:** ເຫັນດີໃຫ້ສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນ ອະນຸມັດການຈ່າຍເງິນປັນຜົນຈາກຜົນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2025 ໃຫ້ແກ່ຜູ້ຖືຮຸ້ນທີ່ມີລາຍຊື່ຢູ່ໃນປຶ້ມບັນຊີຜູ້ຖືຮຸ້ນໃນມື້ປິດປຶ້ມບັນຊີຜູ້ຖືຮຸ້ນ ເຊິ່ງມື້ດັ່ງກ່າວຈະໄດ້ກຳນົດຕໍ່ໄປໃນ **ວາລະທີ 7** ໃນອັດຕາ **40** ສ່ວນຮ້ອຍຂອງກຳໄລສຸດທິພາຍຫຼັງຫັກຄັງສຳຮອງຕາມກົດໝາຍ ແລະ ຄັງສຳຮອງສະສົມອື່ນໆ ຕາມນະໂຍບາຍການຈ່າຍເງິນປັນຜົນຂອງບໍລິສັດ, ໃນອັດຕາ **130.16** ກີບຕໍ່ຮຸ້ນ , ເປັນຈຳນວນເງິນປັນຜົນທັງໝົດ **21,477,038,259** ກີບ ໂດຍກຳນົດວັນຈ່າຍເງິນປັນຜົນແມ່ນ 8 ພຶດສະພາ 2026.
5. **ມະຕິ:** ເຫັນດີໃຫ້ສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນ ເພື່ອພິຈາລະນາ ແລະ ອະນຸມັດການແຕ່ງຕັ້ງ **ບໍລິສັດ ເອີນ ແອນ ຢັ ງ (ລາວ) ຈຳກັດ (Ernst & Young Lao Co., Ltd)**ເປັນຜູ້ກວດສອບບັນຊີພາຍນອກຂອງບໍລິສັດ ປະຈຳປີ 2026 ໂດຍມີຄ່າບໍລິການເປັນຈຳນວນເງິນ ບໍ່ກາຍ **633,265,000 ກີບ.**

6. **ມະຕິ:** ເຫັນດີໃຫ້ມີການຮຽກປະຊຸມສາມັນຜູ້ຖືຮຸ້ນ ໃນວັນທີ **10 ເມສາ 2026** ເວລາ **14.00** ໂມງ ຢູ່ທີ່ ຫ້ອງປະຊຸມໃຫຍ່ ຊັ້ນ 8 ອາຄານຕະຫຼາດຫຼັກຊັບລາວ, ບ້ານໂພນທັນເໜືອ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ ໂດຍມີວາລະເພື່ອພິຈາລະນາ ດັ່ງຕໍ່ໄປນີ້:
   1. ພິຈາລະນາ ແລະ ຮັບຮອງເອົາບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2024;
   2. ພິຈາລະນາ ແລະ ຮັບຮອງບົດລາຍງານຜົນການດຳເນີນທຸລະກິດຂອງບໍລິສັດປະຈຳປີ 2025 ແລະ ບົດລາຍງານການເງິນຂອງບໍລິສັດ ປະຈຳປີ 2025;
   3. ພິຈາລະນາ ແລະ ຮັບຮອງແຜນການດຳເນີນທຸລະກິດຂອງບໍລິສັດປະຈຳປີ 2026;
   4. ພິຈາລະນາ ແລະ ອະນຸມັດການຈ່າຍເງິນປັນຜົນຈາກຜົນການດຳເນີນທຸລະກິດ ປະຈຳປີ 2025;
   5. ພິຈາລະນາການແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກ ແລະ ການກຳນົດຄ່າບໍລິການກວດສອບບັນຊີຂອງຜູ້ກວດສອບບັນຊີພາຍນອກ ປະຈຳປີ 2026;
7. **ມະຕິ:** ເຫັນດີໃຫ້ກຳນົດເອົາວັນທີ **04 ມີນາ 2026** ເປັນມື້ປິດປຶ້ມບັນຊີຜູ້ຖືຮຸ້ນຂອງບໍລິສັດ ເພື່ອກຳນົດລາຍຊື່ຜູ້ຖືຮຸ້ນ ທີ່ມີສິດເຂົ້າຮ່ວມປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2025 ແລະ ຮັບເງິນປັນຜົນຈາກຜົນການດຳເນີນທຸລະກິດ ຂອງບໍລິສັດ ປະຈຳປີ 2025.
8. **ມະຕິ:** ເຫັນດີໃຫ້ແຕ່ງຕັ້ງ **ທ່ານຈ້ອນນີ ພັນທະມິດ** ແລະ **ທ່ານບຸນຖິ່ມ ຟອງວິລາດ** ໃຫ້ເປັນຜູ້ຕາງໜ້າບໍລິສັດຈົດທະບຽນ ເຊິ່ງມີຄວາມຮູ້ທາງດ້ານກົດໝາຍ ເພື່ອປະກອບສ່ວນເຂົ້າໃນຄະນະກວດກາກອງປະຊຸມຜູ້ຖືຮຸ້ນ ແລະ ລົງຄະແນນສຽງ ຕາມລະບຽບ ແລະ ກົດໝາຍທີ່ກ່ຽວຂ້ອງ ໃນສ່ວນການແຕ່ງຕັ້ງຕົວແທນຜູ້ຖືຮຸ້ນລາຍຍ່ອຍນັ້ນ ເຫັນດີມອບອຳນາດໃຫ້ **ທ່ານພັນໂນລາ ສຸຄະບັນດິດ** ແຕ່ງຕັ້ງໂດຍຄັດເລືອກເອົາຈາກຜູ້ຖືຮຸ້ນລາຍຍ່ອຍ ທີ່ເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນມື້ດັ່ງກ່າວ ເຊິ່ງເປັນຜູ້ຖືຮຸ້ນລາຍຍ່ອຍຄືຖືຮຸ້ນບໍ່ເກີນ 5 ສ່ວນຮ້ອຍຂອງຈຳນວນຮຸ້ນທີ່ຈົດທະບຽນ ແລະ ຊຳລະແລ້ວທັງໝົດ ແລະ ເປັນຜູ້ທີ່ມີຄຸນນະສົມບັດຕາມລາຍລະອຽດທີ່ກ່າວມາຂ້າງເທິງ.

ກອງປະຊຸມໄດ້ປິດລົງເວລາ 15:30 ໂມງ ຂອງວັນດຽວກັນ.

ປະທານສະພາບໍລິຫານ
ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ

ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ SOUVANNY HOME CENTER PUBLIC COMPANY

ທ່ານ ສົມຈິດ ອິນທະມິດ